ວາລະສານ

# ກະສິກຳ ແລະ ປ່າໄມ້

ປະຈຳ ອາທິດວັນທີ 30 ກັນຍາ ຫາ 04 ຕຸລາ 2024




ສປປ ລາວ ສະເຫຼີມສະຫຼອງວັນກາເຟສາກົນ ປະຈຳປີ 2024

ຫ້ອງການກະຊວງກະສິກຳ ແລະ ປ່າໄມ້




# ສປປ ລາວ ສະເຫຼີມສະຫຼອງວັນກາເຟສາກົນ ປະຈຳປີ 2024

ພາບ-ຂ່າວໂດຍ: ພະແນກໂຄສະນາ ແລະ ຂ່າວສານ

ໃນວັນທີ 27 ກັນຍາ 2024 ຢູ່ທີ່ສູນການຄ້າວຽງຈັນເຊັນເຕີ ກະຊວງກະສິກຳ ແລະ ປ່າໄມ້, ກະຊວງການຄ້າ ແລະ ອຸດສາຫະກຳ, ສະມາຄົມກາເຟລາວ, ກຸ່ມຄົນຮັກກາເຟລາວ ແລະ ບັນດາຄູ່ຮ່ວມງານເຊັ່ນ ອົງການ Oxfam, ອົງການແຮງງານສາກົນ, ໂຄງການ LURAS, ອົງການ Helvetas, ອົງການ Care ປະຈຳ ສປປ ລາວ, ສະມາຄົມຊາວກະສິກອນລາວ, CPC, Coffee Fix ໄດ້ຮ່ວມກັນຈັດງານບຸນກາເຟບ້ານເຮົາປະຈຳປີ 2024 ຂຶ້ນ ພາຍໃຕ້ຫົວຂໍ້: ກາເຟ: ກິດຈະວັດປະຈຳວັນຂອງເຈົ້າ, ການເດີນທາງຮ່ວມກັນຂອງພວກເຮົາ

ພິທີສະເຫຼີມສະຫຼອງດັ່ງກ່າວນີ້ເປັນກຽດເຂົ້າຮ່ວມເປັນປະທານເປີດງານ ຂອງທ່ານ ປອ ນ. ຈັນທະຄອນ ບົວລະພັນ ຮອງລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້, ທ່ານ ນ. ຊິບ-ເລັງ ຊໍອໍ ເອກອັກຄະລັດຖະທູດ ຝຣັ່ງ ປະຈຳ ສປປ ລາວ ແລະ ທ່ານ ມິນຣ ເລໂອນາດ ອຸປະທູດສະຫະພາບເອີຣົບປະຈຳ ສປປ ລາວ. ພ້ອມດ້ວຍບັນດາທ່ານຫົວໜ້າ-ຮອງຫົວໜ້າຫ້ອງການ, ກົມ, ອົງການຈັດ ຕັ້ງສາກົນ ແລະ ຜູ້ປະກອບການເຂົ້າຮ່ວມ.

ວັນກາເຟສາກົນ ແມ່ນຖືກກຳນົດໃນວັນທີ 1 ຕຸລາ ໂດຍໄດ້ມີການສະເຫຼີມສະຫຼອງທຸກໆປີ ໃນຫຼາຍກວ່າ 70 ປະເທດທົ່ວໂລກ. ສຳລັບຢູ່ ສປປ ລາວ, ງານດັ່ງກ່າວໄດ້ຈັດຂຶ້ນທຸກໆປີ ນັບແຕ່ປີ 2018




ເປັນຕົ້ນມາ ແລະ ໄດ້ກາຍເປັນບ່ອນພົບປະ ປະຈຳປີຂອງຄົນຮັກກາເຟ ແລະ ພາກສ່ວນກ່ຽວຂ້ອງ ເພື່ອຍົກໃຫ້ເຫັນເຖິງຄວາມສຳຄັນຂອງກາເຟລາວ ໃນຕະຫຼາດທັງພາຍໃນ ແລະ ຕ່າງປະເທດ, ສະແດງໃຫ້ເຫັນເຖິງການຮ່ວມມື ເພື່ອການພັດທະນາແບບຍືນຍົງ. ປີນີ້, ໂຄງການ ກຣີນຄັບ ແລະ ຄູ່ຮ່ວມງານໄດ້ນຳເອົາບັນດາພາກສ່ວນກ່ຽວຂ້ອງຈາກພາກລັດ, ອົງກອນ, ຄູ່ຮ່ວມພັດທະນາ ແລະ ພາກເອກະຊົນເຂົ້າຮ່ວມ.

ທ່ານ ປອ ນາງ ຈັນທະຄອນ ບົວລະພັນ, ຮອງລັດຖະມົນຕີ ກະຊວງກະສິກຳ ແລະ ປ່າໄມ້ ໄດ້ກ່າວໃນຄຳປາໄສກ່ຽວກັບບົດບາດອັນສຳຄັນຂອງກາເຟໃນການພັດທະນາເສດຖະກິດ-ສັງຄົມຂອງປະເທດວ່າ: "ກາເຟລາວເປັນສິນຄ້າສົ່ງອອກທີ່ສຳຄັນ, ທີ່ປະກອບສ່ວນຢ່າງຫຼວງຫຼາຍໃຫ້ແກ່ເສດຖະກິດຂອງພວກເຮົາ, ຄືດັ່ງຫົວຂໍ້ໃນປີນີ້ 'ກາເຟ: ກິດຈະວັດປະຈຳວັນຂອງເຈົ້າ, ການເດີນທາງຮ່ວມກັນຂອງພວກເຮົາ' ສະທ້ອນໃຫ້ເຫັນເຖິງຄວາມມານະພະຍາຍາມຮ່ວມກັນລະຫວ່າງຫຼາຍພາກສ່ວນເພື່ອສົ່ງເສີມກາເຟລາວ ໃຫ້ກ້າວໄປສູ່ການປະຕິບັດແບບຍືນຍົງ, ນໍລະດົກ ແລະ ບົດບາດຂອງຕົນໃນການຊຸກຍູ້ການພັດທະນາສີຂຽວ."

ທ່ານເອກອັກຄະລັດຖະທູດຝຣັ່ງ ປະຈຳ ສປປ ລາວ ພະນະທ່ານ ນາງ ຊິບ-ເລັງ ຊໍອໍ ໄດ້ຍົກໃຫ້ເຫັນຄວາມສຳຄັນຂອງການຮ່ວມມືລະຫວ່າງ 2 ປະເທດໃນການຊຸກຍູ້ການຄ້າ ແລະ ການລົງທຶນໃນເສດຖະກິດສີຂຽວ: "ການຮ່ວມມືລະຫວ່າງສອງປະເທດ ຝຣັ່ງ ແລະ ສປປ ລາວ ແມ່ນການຮ່ວມມືແບບຍືນຍົງ ແລະ ຕໍ່ເນື່ອງ, ໂຄງການ Green Cup ສະທ້ອນໃຫ້ເຫັນຜົນສຳເລັດຂອງການສະໜັບສະໜູນຂອງຝຣັ່ງໃຫ້ແກ່ຂະແໜງກະສິກຳ ແລະ ນຳມາເຊິ່ງຄວາມຕັ້ງໃຈຕໍ່ "ການຮ່ວມມືຂອງທີມເອີຣົບ ກັບ ສປປ ລາວ ເພື່ອເພີ່ມທະວີການຮ່ວມມືດ້ານການຄ້າ, ການລົງທຶນ ແລະ ການເຊື່ອມຕໍ່ແບບ

ຍືນຍົງ. ໃນຂະແໜງກະສິກຳ, ລັດຖະບານຝຣັ່ງ ມີຄວາມພາກພູມໃຈທີ່ໄດ້ເປັນສ່ວນໜຶ່ງຂອງໂຄງການນີ້, ເຊິ່ງສ້າງຜົນສຳເລັດຂອງ 20 ປີແຫ່ງການຮ່ວມມືດ້ານກະສິກຳລະຫວ່າງຝຣັ່ງ ແລະ ລາວ”.

ເພື່ອເນັ້ນໜັກບົດກ່າວເປີດຂອງທ່ານເອກອັກຄະລັດຖະທູດ, ທ່ານ ບຸນຈັນ ກົມບຸນຍະສິດ, ຫົວໜ້າກົມປູກຝັງ ໄດ້ກ່າວຕື່ມວ່າ:“ກາເຟ ແມ່ນໜຶ່ງໃນສິນຄ້າກະສິກຳ ທີ່ສຳຄັນຂອງ ສປປລາວ, ມັນຊ່ວຍສ້າງລາຍຮັບໃຫ້ຊາວສວນ ຂະໜາດນ້ອຍ ແລະ ປະກອບສ່ວນເຂົ້າໃນລາຍຮັບແຫ່ງຊາດຂອງພວກເຮົາ. ໃນປັດຈຸບັນ ກົມປູກຝັງຂອງພວກເຮົາແມ່ນສຸມໃສ່ການປັບປຸງເຕັກນິກການຜະລິດ ແລະ ມາດຕະຖານເພື່ອເສີມຂະຫຍາຍການແຂ່ງຂັນໃນຕະຫຼາດໂລກ.”

ໃນງານສະເຫຼີມສະຫຼອງໃນປີນີ້ມີບັນດາ ກຸ່ມປູກກາເຟ, ສະຫະກອນຜູ້ປູກກາເຟ ແລະ ຫຼາຍພາກສ່ວນນຳເອົາຜະລິດຕະພັນກາເຟລາວເຂົ້າມາຮ່ວມວາງສະແດງສາທິດການຊົງກາເຟ ແລະ ຊີມກາເຟຂອງແຕ່ລະພາກສ່ວນທີ່ນຳມາວາງສະແດງ. ງານສະເຫຼີມສະຫຼອງແມ່ນໄດ້ເລີ່ມຕັ້ງແຕ່ ວັນທີ 27-29 ກັນຍາ 2024.




**ຄະນະຮັບຜິດຊອບ:**
ທ່ານ ສີປະໄພ ໄຊສີງຄາມ
ທ່ານ ສີສະຫວາດ ທອນດາລາ

**ບັນນາທິການ:**
ທ່ານ ກິດຊະນະ ພິມມະຈັນ
ທ່ານ ໂຊລາ ສິມມະລາວົງ
ທ່ານ ນ. ທອງພຸດ ວົງພະຈັນ
ທ່ານ ນ. ຄຳແພງ ເກສອນ

**ຈັດໜ້າອອກແບບໂດຍ:**
ທ່ານ ນ. ສີອຳນອນ ໄຊຍະລາດ

ຕິດຕໍ່ ແລະ ລົງໂຄສະນາໄດ້ທີ່: ພະແນກໂຄສະນາ ແລະ ຂ່າວສານ, ຫ້ອງການກະຊວງ 021 410154;
website: www.maf.gov.la;
Facebook: ຂ່າວສານກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ;
Youtube: ລາຍການກະສິກຳ;ແລະ ປ່າໄມ້;